# ຍື່ນໃບແຈ້ງລາຍໄດ້ເພື່ອເສຍອາກອນເພື່ອທີ່ຈະໄດ້ຮັບເງິນຄືນ.



ທ່ານອາດມີສິດໄດ້ຮັບເງິນອາກອນຂອງທ່ານຄືນຫຼາຍພັນໂດລາເມື່ອທ່ານຂໍເງິນຈາກອາກອນລາຍໄດ້ຂອງລັດຖະບານ ແລະເງິນອາກອນເດັກ

## ວິທີຮັບເງິນອາກອນຂອງທ່ານ:

1 **ກວດເບິ່ງວ່າ ທ່ານມີ ສິດເໝາະສົມຫຼືບໍ່**

ກວດເບິ່ງຈຳນວນເງິນທີ່ທ່ານຈະໄດ້ຮັບ ໄດ້ທີ່ເວັບໄຊ TaxOutreach.org/TaxCredits.

2 **ຊອກຫາການຊ່ວຍເຫຼືອດ້ານ ອາກອນ ໂດຍບໍ່ເສຍຄ່າ**

ເບິ່ງທີ່ເວັບໄຊ GetYourRefund.org ຫຼືໂທ 800-906-9887, ເຖິງແມ່ນວ່າ ປົກກະຕິແລ້ວທ່ານບໍ່ຍື່ນແຈ້ງອາກອນກໍຕາມ.

3 **ແຈ້ງອາກອນ ຂອງທ່ານ**

ຮັບການຊ່ວຍເຫຼືອເພື່ອຍື່ນໃບແຈ້ງລາຍໄດ້ເພື່ອເສຍອາກອນໂດຍບໍ່ເສຍຄ່າພາຍໃນວັນທີ 15 ເມສາ 2024.

## ສິ່ງທີ່ຈະຕ້ອງເອົາໄປນຳໃນເວລານັດໝາຍອາກອນ:

- ❑ ບັດປະຈຳຕົວທີ່ມີຮູບຕິດທີ່ໃຊ້ການໄດ້
- ❑ ບັດປະກັນສັງຄົມ, ຈົດໝາຍຢັ້ງຢືນເລກປະກັນສັງຄົມ, ຫຼື ITIN ສຳລັບທຸກຄົນທີ່ມີຊື່ຢູ່ໃນໃບແຈ້ງລາຍໄດ້ເພື່ອເສຍອາກອນຂອງທ່ານ
- ❑ ແບບຟອມ W-2 ຫຼື 1099
- ❑ ແບບຟອມ 1095-A
- ❑ ແຈ້ງການ IRS ຕ່າງໆ
- ❑ ຟອມເສຍອາກອນປີ 2021 ແລະ 2022, ຖ້າວ່າມີ
- ❑ ລະຫັດສ່ວນບຸກຄົນ (IP PIN), ຖ້າວ່າມີ

**ສຳລັບຂໍ້ມູນເພີ່ມເຕີມ, ເບິ່ງທີ່ TaxOutreach.org/TaxCredits ຫຼື ໂທຫາ IRS ທີ່ເບີໂທ 1-800-829-1040**



## ເງື່ອນໄຂການມີສິດໄດ້ຮັບສໍາລັບເງິນອາກອນລາຍໄດ້ (EITC) ແລະເງິນອາກອນເດັກ (CTC):

**ຖ້າວ່າ ທ່ານບໍ່ມີລູກ ທ່ານກໍອາດມີສິດໄດ້ຮັບ EITC ສູງເຖິງ $600 ຖ້າວ່າ:**

**ອາຍຸ:**

ທ່ານມີອາຍຸລະຫວ່າງ 25-64 ປີ ໃນວັນທີ 31 ທັນວາ 2023.

**ລາຍໄດ້ປະຈໍາປີ 2023**:

ທ່ານມີລາຍໄດ້ຕໍ່າກວ່າ $17,640 ($24,210 ຖ້າວ່າແຕ່ງງານແລ້ວ).

**ຖ້າວ່າທ່ານບໍ່ແມ່ນພົນລະເມືອງສະຫະລັດ ທ່ານກໍອາດມີສິດເໝາະສົມ ຖ້າວ່າ:**

- **EITC:** ທ່ານ, ຄູ່ສົມລົດ, ແລະເດັກທີ່ທ່ານຂໍໃຫ້ນັ້ນມີເລກປະກັນສັງຄົມ (SSN) ທີ່ໃຊ້ການໄດ້.
- **CTC:** ເດັກທີ່ທ່ານຂໍໃຫ້ນັ້ນມີເລກ SSN. ທ່ານແລະຄູ່ສົມລົດຂອງທ່ານຕ້ອງມີເລກ SSN ຫຼື ເລກປະຈໍາຕົວຜູ້ເສຍອາກອນສ່ວນບຸກຄົນ (ITIN).

# ຂ້າພະເຈົ້າມີສິດໄດ້ຮັບບໍ່?

**ເມື່ອຮອດເວລາເສຍອາກອນ, ທ່ານສາມາດເປັນໜີ້ພາສີໜ້ອຍລົງໄດ້ ແລະໄດ້ຮັບເງິນຄືນ** ຈາກອາກອນລາຍໄດ້ ແລະອາກອນເດັກ! ຖ້າວ່າ ທ່ານໄດ້ເຮັດວຽກໃນປີ 2023, ທ່ານອາດມີສິດໄດ້ຮັບເງິນອາກອນເຫຼົ່ານີ້.

**ເງິນຊ່ວຍເຫຼືອປະຊາຊົນ:**

- ການຂໍເອົາເງິນອາກອນເຫຼົ່ານີ້ ຈະບໍ່ປ່ຽນແປງການມີສິດໄດ້ຮັບຂອງທ່ານສໍາລັບເງິນຊ່ວຍເຫຼືອຈາກລັດຖະບານ ເຊັ່ນ SNAP (ສະແຕມອາຫານ), SSI, Medicaid, ການຊ່ວຍເຫຼືອດ້ານເງິນສົດ, ຫຼື ການຈັດຫາບ່ອນພັກອາໄສໃຫ້ກັບປະຊາຊົນ.
- ຖ້າວ່າ ທ່ານສະສົມເງິນທີ່ໄດ້ຮັບຄືນຈາກອາກອນຂອງທ່ານ, ມັນຈະບໍ່ຖືກນັບລວມໃສ່ຂອບເຂດຈໍາກັດດ້ານຊັບພະຍາກອນ/ຊັບສິນໃນໂຄງການຜົນປະໂຫຍດທີ່ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານ ເປັນເວລາ 12 ເດືອນ ຫຼັງຈາກໄດ້ຮັບເງິນຄືນແລ້ວ.

## ຖ້າວ່າ ທ່ານມີລູກ ທ່ານອາດມີສິດໄດ້ຮັບເງິນອາກອນ EITC ແລະ CTC ຖ້າວ່າ:

**ທີ່ຢູ່ອາໄສ:**

- ລູກຂອງທ່ານໄດ້ອາໄສຢູ່ກັບທ່ານມາຫຼາຍກວ່າເຄິ່ງປີ 2023.

**ອາຍຸ – ລູກຕ້ອງມີອາຍຸ:**

- **EITC:** 18 ປີຫຼື ຕໍ່າກວ່າ ໃນວັນທີ 31 ທັນວາ 2023 (ນັກຮຽນເຕັມເວລາ ສາມາດມີອາຍຸຕໍ່າກວ່າ 24 ປີ ແລະເດັກພິການຖາວອນ ແລະພິການທັງໝົດສາມາດມີອາຍຸເທົ່າໃດກໍໄດ້).
- **CTC:** 16 ປີ ຫຼືຕໍ່າກວ່າ ໃນວັນທີ 31 ທັນວາ 2023.

**ລາຍໄດ້ປະຈໍາປີ 2023:**

- **ສໍາລັບ CTC ຂອງລັດຖະບານ**, ຖ້າວ່າ ທ່ານມີລາຍຮັບຫຼາຍກວ່າ $2,500, ທ່ານສາມາດຂໍເອົາເງິນອາກອນໄດ້ສູງເຖິງ $2,000 ຕໍ່ເດັກໜຶ່ງຄົນ.
- **ສໍາລັບ EITC ຂອງລັດຖະບານ**, ລາຍຮັບຂອງທ່ານຕ້ອງຕໍ່າກວ່າຈໍານວນທີ່ກໍານົດໄວ້ດັ່ງຕໍ່ໄປນີ້:

| ຈໍານວນເດັກ | ຜູ້ອອກແຮງງານທີ່ຍັງໂສດມີລາຍໄດ້ຕໍ່າກວ່າ: | ຜູ້ອອກແຮງງານທີ່ແຕ່ງງານແລ້ວມີລາຍໄດ້ຕໍ່າກວ່າ: | EITC ສູງເຖິງ: |
|---|---|---|---|
| **ເດັກ 1 ຄົນ** | $46,560 | $53,120 | $3,995 |
| **ເດັກ 2 ຄົນ** | $52,918 | $59,478 | $6,604 |
| **ເດັກ 3 ຄົນຂຶ້ນໄປ** | $56,838 | $63,398 | $7,430 |

### ມັນບໍ່ສາຍເກີນໄປທີ່ຈະຂໍເອົາເງິນອາກອນທີ່ຂະຫຍາຍເວລາປີ 2021!

**ເນື່ອງຈາກເຫດການພະຍາດລະບາດ, EITC ແລະອາກອນເດັກໄດ້ຖືກຂະຫຍາຍເວລາ ແລະມີໃຫ້ແກ່ຜູ້ຄົນຫຼາຍກວ່າເກົ່າ.** ການຂະຫຍາຍເວລານັ້ນໄດ້ສິ້ນສຸດລົງແລ້ວ, ແຕ່ຖ້າວ່າ ທ່ານມີເງື່ອນໄຂໄດ້ຮັບສໍາລັບ EITC ທີ່ຂະຫຍາຍເວລາປີ 2021, ອາກອນເດັກທີ່ຂະຫຍາຍເວລາປີ 2021, ຫຼື ເຊັກກະຕຸ້ນ (Stimulus checks) ໃດໆ ໃນສາມຮອບ ແລະຍັງບໍ່ໄດ້ຍື່ນຂໍເອົາ, ມັນກໍຍັງບໍ່ສາຍເກີນໄປ! ເບິ່ງທີ່ເວັບໄຊ TaxOutreach.org/expanded ເພື່ອຮຽນຮູ້ຕື່ມ.